**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ໜັງສືແຈ້ງເຊີນປະມູນ

ແຂວງຊຽງຂວາງ
ພະແນກກະສິກຳ ແລະ ສິ່ງແວດລ້ອມ

ເລກທີ:......2709....../ກສຂ
ຊຽງຂວາງ, ວັນທີ: **15** ກໍລະກົດ 2026

ສັນຍາເງິນກູ້ຢືມເລກທີ: ADB Loan 3817-LAO, ສັນຍາເງິນຊ່ວຍເຫຼືອລ້າເລກທີ: ADB Grant 0659-LAO (SF), ສັນຍາເງິນຊ່ວຍເຫຼືອລ້າເລກທີ: EU Grant 0660-LAO (EF) ແລະ ສັນຍາເງິນຊ່ວຍເຫຼືອລ້າເລກທີ: GAFSP Grant 0912-LAO (EF.

**ຊື່ພູດການປະມູນ/ສັນຍາ:** ກໍ່ສ້າງ - ສ້ອມແປງຊົນລະປະທານນໍ້າປີວ ເມືອງຄຳ ແຂວງຊຽງຂວາງ.
**ເລກທີອ້າງອີງ**: **OP3-CW09**

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ ທຶນຈາກທະນາຄານພັດທະນາອາຊີເພື່ອໃຊ້ຈ່າຍສຳລັບໂຄງການ ພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ (SRIWSM) ແລະ ມີຈຸດປະສົງນຳໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນລາຍຈ່າຍຂອງສັນຍາກໍ່ສ້າງ - ສ້ອມແປງຊົນລະປະທານນໍ້າປີວ ເມືອງຄຳ ແຂວງຊຽງຂວາງ (ສັນຍາເລກທີ: OP3-CW09).
2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຊຽງຂວາງ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມເຂົ້າຍື່ນຊອງປະມູນສຳລັບ ຟື້ນຟູສ້ອມແປງລະບົບຄອງເໝືອງຊົນລະປະທານຊົນລະປະທານນໍ້າປີວ ເມືອງຄຳ ແຂວງຊຽງຂວາງ (ສັນຍາເລກທີ: OP3-CW09), ໄລຍະກໍ່ສ້າງ 18 ເດືອນ.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ໂດຍປະກາດ ຜ່ານສື່ພາຍໃນປະເທດ ຕາມທີ່ໄດ້ລະບຸໄວ້ໃນນະໂຍບາຍ ແລະ ລະບຽບການຈັດຊື້-ຈັດຈ້າງ ຂອງທະນາຄານພັດທະນາອາຊີ (ປີ 2017, ແລະ ສະບັບທີ່ປັບປຸງເປັນໄລຍະ) ແລະ ເປີດໃຫ້ທຸກໆຜູ້ປະມູນທີ່ມີຄວາມເໝາະສົມ ຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນ ເອກະສານປະມູນ.
4. ຜູ້ປະມູນສາມາດເບິ່ງເງື່ອນໄຂຄວາມເໝາະສົມ ແລະ ດ້ານຄຸນນະວຸທິ ໃນເອກະສານປະມູນ.
   - ລາຍຮັບສະເລ່ຍຈາກການກໍ່ສ້າງ: ຢ່າງໜ້ອຍ 1,700,000 ໂດລາສະຫະລັດ ຕາມທີ່ກຳນົດໃນເອກະສານປະມູນ, ຄິດໄລ່ເປັນການຈ່າຍເງິນທີ່ໄດ້ຮັບການຮັບຮອງທັງໝົດທີ່ໄດ້ຮັບສຳລັບສັນຍາທີ່ສຳເລັດ ຫຼື ກຳລັງດຳເນີນຢູ່ ໃນໄລຍະ 3 ປີລ່າສຸດ (2023 - 2025).ຖ້າເປັນຜູ້ປະມູນທຸລະກິດຮ່ວມ ທຸກໆພາກສ່ວນຮ່ວມກັນ ຕ້ອງຜ່ານເງື່ອນໄຂ 100%.
   - ປະສົບການ: ຢ່າງໜ້ອຍ 1 ໂຄງການກໍ່ສ້າງຂອງສັນຍາທີ່ຄ້າຍຄືກັນ ທີ່ເຊັນສັນຍາ ແລະ ສຳເລັດໄປແລ້ວເປັນສ່ວນໃຫຍ່ໃນນາມເປັນຜູ້ຮັບເໝົາຫຼັກ, ສະມາຊິກຂອງບໍລິສັດຮ່ວມທຸລະກິດ ຫຼື ຜູ້ຮັບເໝົາຊ່ວງຕໍ່ ນັບຕັ້ງແຕ່ວັນທີ 1 ມັງກອນ 2021 ແລະ ກຳນົດວັນຍື່ນຊອງປະມູນ, ມີມູນຄ່າສັນຍາຢ່າງໜ້ອຍ 1,400,000 ໂດລາສະຫະລັດ.
   - ເງື່ອນໄຂອື່ນໆແມ່ນກຳນົດໃນ ເອກະສານປະມູນ.

5. ຜູ້ປະມູນທີ່ມີຄວາມເໝາະສົມສາມາດພົວພັນເອົາຂໍ້ມູນ ແລະ ກວດກາເບິ່ງເອກະສານປະມູນ ຢູ່ທີ່ຢູ່ຂ້າງລຸ່ມ ໃນໂມງລັດຖະການ. ໃນກໍລະນີທີ່ພົບຄວາມຫຍຸ້ງຍາກໃນການພົວພັນເອົາຂໍ້ມູນ ແລະ ກວດກາເບິ່ງເອກະສານປະມູນ, ຜູ້ປະມູນ ສາມາດສອບຖາມຜ່ານທາງ ອີເມລ: soutthasinhs@gmail.com.

   ຜູ້ປະມູນທີ່ມີຄວາມເໝາະສົມ ແລະ ສົນໃຈ ສາມາດຍື່ນໜັງສືສະເໜີຂໍຊື້ເອກະສານປະມູນຄົບຊຸດເປັນພາສາລາວ, ໃນມູນຄ່າ 150 ໂດລາສະຫະລັດ ດ້ວຍການຈ່າຍເປັນເງິນສົດ ຫຼື ໂອນເຂົ້າບັນຊີໂຄງການ ພຊດ: ເລກທີບັນຊີ 13011010101762732001. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນສາຂາແຂວງຊຽງຂວາງ.

6. ຊອງປະມູນຈະຕ້ອງສົ່ງ ໃນວັນທີ ຫຼື ກ່ອນມື້ເປີດຊອງ ວັນທີ **20 ສິງຫາ 2026 ເວລາ 09 ໂມງ 00 ນາທີ** ທີ່ຫ້ອງປະຊຸມຂອງ ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຊຽງຂວາງ. ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ການປະມູນຈະເປີດຕໍ່ສາທາລະນະ ໂດຍຊ້ອງໜ້າ ຄະນະກຳມະການ ຈັດຊື້-ຈັດຈ້າງ, ຕົວແທນຂອງຜູ້ ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນທີ່ມີຄວາມສົນໃຈ ຢູ່ສະຖານທີ່ໆກຳນົດໄວ້ຂ້າງລຸ່ມນີ້.

7. ເອກະສານຈະຕ້ອງປະກອບຫນັງສື " ການຄໍ້າປະກັນການປະມູນດ້ວຍກຽດ ".

8. ທີ່ຢູ່ທີ່ເວົ້າເຖິງຢູ່ຂ້າງເທິງນີ້ແມ່ນ:

   ຫ້ອງປະຊຸມຂອງ ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຊຽງຂວາງ. ບ້ານປອນ, ເມືອງແປກ, ແຂວງຊຽງຂວາງ, ສປປ ລາວ.

   ເບີໂທລະສັບ +856 20 2234 5390

   ອີເມລ: soutthasinhs@gmail.com

ຮ ຫົວໜ້າພະແນກ

ດາຫຼ້າ ຈັນທະວອນ